ໂຄງການເຊື່ອມໂຍງຊ່ອງຫວ່າງການຈັດຕັ້ງປະຕິບັດນະໂຍບາຍຕໍ່ກັບໄຟຟ້າພະລັງງານນໍ້າ

# ເຄື່ອງມືໃນການເຜີຍແຜ່ນະໂຍບາຍ

ໃນຂົງເຂດໂຄງການພັດທະນາໄຟຟ້າພະລັງງານນໍ້າ

# 1. ໂປສເຕີ

*Facilitating Dialog*




- ການຈ່າຍຄ່າຊົດເຊີຍ
- ການຍົກຍ້າຍຈັດສັນ
- ການພັດທະນາຊີວິດການເປັນຢູ່
- ການຮ້ອງທຸກ

# ເປົ້າໝາຍຂອງການນຳໃຊ້ໂປຣເຕີ

- ໂປສເຕີແມ່ນອອກແບບສຳລັບພະນັກງານລັດໃນຂັ້ນເມືອງ ເພື່ອນຳໃຊ້ໃນການອຳນວຍຄວາມສະດວກໃນການສົນທະນາ ກັບຊາວບ້ານ.

1. ຂັ້ນຕອນພື້ນຖານໃນການເຂົ້າຮ່ວມໂຄງການພັດທະນາໄຟຟ້າພະລັງງານນ້ຳ
2. ຂໍ້ມູນຂ່າວສານທີ່ເຂົາເຈົ້າຄວນຈະໄດ້ຮັບຈາກໂຄງການ
3. ໂອກາດທີ່ເຂົາເຈົ້າຕ້ອງເຂົ້າມາມີສ່ວນຮ່ວມ
4. ການຊ່ວຍເຫຼືອທີ່ເຂົາເຈົ້າຄວນຈະໄດ້ຮັບ
5. ວິທີການໃດທີ່ເຂົາເຈົ້າສາມາດເຂົ້າເຖິງການຊ່ວຍເຫຼືອໃນການແກ້ໄຂບັນຫາທີ່ມີໃນໂຄງການ

# ວິທີການນຳໃຊ້ໄປຣເຕີ

1、 ອຳນວຍຄວາມສະດວກໃນການສືນທະນາກັບຊາວບ້ານ

2、 ວິທີທີ່ດີທີ່ສຸດແມ່ນພາກສ່ວນຮັບຜິດຊອບຈາກລັດຮ່ວມກັບບໍລິສັດໃຊ້ຮ່ວມກັນ

# 2. ຄູ່ມືແນະນຳການນຳໃຊ້ໂປຣເຕີ



## ເຄື່ອງມືໃນການສື່ສານບົດເນາະນຳຄູຝຶກ

*ການນຳໃຊ້ໂປສເຕີເພື່ອອຳນວຍຄວາມສະດວກໃນການສົນທະນາ ແລະ ການສ້າງຄວາມເຂົ້າໃຈ*

### ຈຸດປະສົງຂອງການນຳໃຊ້ໂປສເຕີ

ໂປສເຕີແມ່ນອອກແບບສຳລັບພະນັກງານສັດໃນຂັ້ນເມືອງ ເພື່ອນຳໃຊ້ໃນການອຳນວຍຄວາມສະດວກໃນການສົນທະນາ ກັບຊາວບ້ານ. ໂປສເຕີແມ່ນສາມາດຊ່ວຍໃຫ້ ຊາວບ້ານມີຄວາມເຂົ້າໃຈໃນພາລະບົດບາດຂອງຕົນເອງໃນການພັດທະ ນາໄຟຟ້າພະລັງງານນ້ຳ, ໂດຍສະເພາະແມ່ນຄວາມເຂົ້າໃຈດັ່ງຕໍ່ໄປນີ້:

- ຂັ້ນຕອນພື້ນຖານໃນການເຂົ້າຮ່ວມໂຄງການພັດທະນາໄຟຟ້າພະລັງງານນ້ຳ
- ຂໍ້ມູນຂ່າວສານທີ່ເຂົາເຈົ້າຄວນຈະໄດ້ຮັບຈາກໂຄງການ
- ໂອກາດທີ່ເຂົາເຈົ້າຕ້ອງເຂົ້າມາມີສ່ວນຮ່ວມ
- ການຊ່ວຍເຫຼືອທີ່ເຂົາເຈົ້າຄວນຈະໄດ້ຮັບ
- ວິທີການໃດທີ່ເຂົາເຈົ້າສາມາດເຂົ້າເຖິງການຊ່ວຍເຫຼືອໃນການແກ້ໄຂບັນຫາທີ່ມີໃນໂຄງການ

ດ້ວຍຂໍ້ມູນຂ່າວສານ ແລະລະບອບການທີ່ຈະແຈ້ງກວ່າ ບໍລິສັດ ແລະ ລັດຖະບານຄວນຈະສາມາດເຮັດວຽກກັບຊາວບ້ານ ໄດ້ດີຂຶ້ນກ່ວາເກົ່າເພື່ອ ຜົນປະໂຫຍດອັນສູງສຸດ ຂອງຊາວບ້ານຈາກການພັດທະນາ ແລະ ການຫຼຸດຜ່ອນບັນຫາ ແລະ ຜົນກະທົບທາງລົບ.

### ເຄັດລັບໃນການອຳນວຍຄວາມສະດວກ

ເນື່ອງຈາກວ່າຈຸດປະສົງແມ່ນເພື່ອເພີ່ມທະວີຄວາມເຂົ້າໃຈຂອງຊາວບ້ານ, ມັນເປັນສິ່ງສຳຄັນທີ່ສຸດທີ່ຈະຊ່ວຍໃຫ້ຊາວ ບ້ານມີການປຶກສາຫາລືບັນຫາ ແລະໃຊ້ພາສາ ແລະສະຖານທີ່ຂອງເຂົາເຈົ້າເອງ ມັນເປັນການດີທີ່ຈະຄ່ອຍໆດຳເນີນໄປ ເທື່ອລະກ້າວ, ໃຊ້ເວລາໃນການສົນທະນາ, ສ້າງຄວາມເຂົ້າໃຈຕໍ່ບັນຫາຫຼາຍຢ່າງ.

| ສິ່ງທີ່ຄວນປະຕິບັດ | ສິ່ງບໍ່ຄວນປະຕິບັດ |
|---|---|
| ແຍກກຸ່ມແມ່ຍິງອອກຕ່າງຫາກ | ໃຫ້ແມ່ຍິງ ແລະຜູ້ຊາຍໃນກຸ່ມດຽວກັນ |
| ແຍກກຸ່ມອຳນາດການປົກຄອງບ້ານຕ່າງຫາກ | ປະຊຸມອຳນາດການປົກຄອງບ້ານຮ່ວມຊາວບ້ານ |
| ຖາມຄຳຖາມຫຍໍ້ຍຫຼາຍຄຳຖາມເຊັ່ນ: ແມ່ນຫຍັງໄນ້ສະນິດໃດຢູ່ໃນນີ້, ພວກເຂົາມີກັບເລື່ອງຫຍັງ? | ຖາມຄຳຖາມທີ່ກ້ວາງເກີນໄປເຊັ່ນ: ຈຸດປະສົງຂອງຮູບແມ່ນໃຊ້ສຳລັບຫຍັງ |
| ມີຄວາມອົດທົນ, ເຮັດໃຫ້ຊາວບ້ານໃຊ້ເວລາເພື່ອຕອບຄຳເປັນພາສາຂອງເຂົາເຈົ້າເອງ ແລະຊາວບ້ານເຮັດໃຫ້ເຂົາເຈົ້າບໍ່ມີ ຄວາມອາຍ ແລະ ເຮັດໃຫ້ເຂົາເຈົ້າມີໂອກາດສະແດງຄຳຄິດເຫັນ ແລະຮັບຟັງຄຳຕອບຂອງຜູ້ອື່ນ | ບໍ່ຄວນໃຈຮ້ອນຕອບແທນຊາວບ້ານ |
| ຊ່ວຍຊາວບ້ານທີ່ມີຄວາມອາຍໃຫ້ເຂົາເຈົ້າໄດ້ມີໂອກາດຕອບ ແລະສະແດງຄຳຄິດເຫັນໃນສິ່ງທີ່ຜູ້ອື່ນຕອບມາ | ເວົ້າຫຼາຍເກີນໄປ, ເວົ້າຕັດຄວາມຊາວບ້ານໃນເວລາຕອບຄຳຖາມຫຼືການສົນທະນາ |
| ໃຫ້ຊາວບ້ານເປັນຜູ້ອາທິບາຍຄວາມເຂົ້າໃຈຂອງເຂົາເຈົ້າເອງ | ບໍ່ຄວນໃຊ້ຄຳຖາມປິດກັບຊາວບ້ານເຊັ່ນ: (ເຈົ້າເຂົ້າໃຈບໍ່) |
| ສ່ອນກຽວຂ້ອງໃນໂປຣເຕີກັບໂປຫາສິ່ງທີ່ເກີດຂື້ນໃນບ້ານ | ສົນທະນາສະເພາະລາຍການໜຶ່ງ |
| ເວົ້າແບບເປັນກັນເອງກັບຊາວບ້ານ. ລົມເລື່ອງຕະຫຼົກກັບຊາວບ້ານກ່ຽວກັບບັນດາຮູບພາບ ແລະຖາມເຂົາເຈົ້າຖາວ່າເຂົາເຈົ້າຢູ່ໃນຮູບບັນດາຮູບພາບເຫຼົ່ານີ້ | ເຮັດຢ່າງເປັນທາງການ, ອ່ານເອກະສານໃຫ້ຊາວບ້ານຟັງ, ສັບມືຖາມຄືທ່ານຮູ້ວ່າບ້ານກໍ່ກັບສິ່ງທີ່ເກີດໃນ ໂປຣເຕີ |
| ປາສະເໜີຫົວຂໍ້ຂອງແຕ່ລະໂປຣເຕີ, ອາທິບາຍຄວາມໝາຍຂອງແຕ່ລະໂປຣເຕີໂດຍຫຍໍ້ເຊັ່ນ: ການຍົກຍ້າຍຈັດສັນຊາວບ້ານ, | ເລີ່ມຖາມຄຳຖາມໂດຍກົງໂດຍປາສະຈາກການອາທິບາຍ |



| | |
|---|---|
| ການຊົດເຊີຍ, ການປັບປຸງຊີວິດການເປັນຢູ່, ການຮ້ອງທຸກ. ທັງ ຈາກນັ້ນເລີ່ມຖາມຄຳຖາມ ແຕ່ບໍ່ອະທິບາຍຍາວເກີນໄປພຽງ ແຕ່ນຳສະເໜີ | |

### ຄຳຖາມ ແລະຄຳຕອບຂອງແຕ່ລະໂປຣເຕີ

#### ການຊົດເຊີຍ

ການຊົດເຊີຍແມ່ນກ່ຽວກັບວິທີການໃດທີ່ທາງໂຄງການຈະຊົດເຊີຍ ຈະເປັນເງິນສົດ ຫຼື ການຊົດເຊີຍເປັນຊັບສິນອື່ນໆສຳລັບຊັບສິນ ແລະໂອກາດທີ່ໄດ້ສູນເສຍເນື່ອງຈາກການປ່ຽນແປງໃນການນຳໃຊ້ທີ່ດິນ(ນ້ຳຖ້ວມ, ກິດຈະກຳ ການກໍ່ສ້າງ, ການປູກພືດ, ປະສະທາງວນສຳລັບການ ປັບປຸງເຂດອ່າງໂຕ່ງ).

ນິຍາມທີ່ເປັນທາງການ (ດຳລັດ 192):
ການຊົດເຊີຍໝາຍເຖິງການ ຈ່າຍເງິນສົດ ຫຼືວັດຖຸສຳລັບຊັບສິນທີ່ຈະໄດ້ຮັບຜົນກະທົບຈາກໂຄງ



ຮູບທີ #1

1. ມີໃຜແດ່ເຂົ້າຮ່ວມ?
2. ພວກເຂົາຢູ່ໃນສະຖານທີ່ຢູ່ໃສ?ສອນໂຄງຮືສາລາລະບະ?
3. ພວກເຂົາກຳລັງລົມຫຍັງກັນ? ຖ້າເຈົ້າຢູ່ໃນກອງປະຊຸມ ເຈົ້າມີຫຍັງທີ່ຈະລົມກັບຕົວແທນບໍລິສັດ? ຄຳຕອບ ແບບໃດທີ່ເຈົ້າຢາກໃຫ້ໂຕແທນ ຂອງບໍລິສັດຕອບເຈົ້າ

# 3. ແຜນພັບ

- ການຈ່າຍຄ່າຊົດເຊີຍ
- ການຍົກຍ້າຍຈັດສັນ
- ການພັດທະນາຊີວິດການເປັນຢູ່






# ວິທີການນຳໃຊ້ແຜ່ນພັບ

1. ສົນທະນາກັບຊາວບ້ານ
2. ແຈກຢາຍໃຫ້ອົງການຈັດຕັ້ງບ້ານ ແລະ ຊາວບ້ານທີ່ສາມາດອ່ານໄດ້

# 4. ຄູ່ມືແນະນຳການສ້າງຕັ້ງຄະນະກຳມະການແກ້ໄຂການຮ້ອງທຸກ

## (ບົດແນະນຳຫຍໍ້)

## ພື້ນຖານເບື້ອງຕົ້ນຂອງຄະນະກຳມະການແກ້ໄຂການຮ້ອງທຸກ

### ຈຸດປະສົງ

ແນວທາງໃນການແກ້ໄຂຂໍ້ຂັດແຍ່ງແມ່ນຈັດຕັ້ງປະຕິບັດໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ, ເຊິ່ງມີລາຍລະອຽດດັ່ງຕໍ່ໄປນີ້:

- ຕອບສະໜອງການສະແດງຄຳຄິດຄຳເຫັນໃຫ້ກັບຕົວແທນຂອງບໍລິສັດພະນັກງານລັດທະບານ. ເພື່ອຜົນປະໂຫຍດອັນ ສູງສຸດຂອງໂຄງການ ສຳລັບຊຸມຊົນໃນທ້ອງຖິ່ນ.
- ປັບປຸງການປະຕິບັດໃຫ້ປະສົມກົມກຽວໂດຍແກ້ໄຂບັນຫາທີ່ອາດມີ ແລະ ການປ້ອງກັນການຂັດແຍ່ງທີ່ອາດຈະເກີດຂຶ້ນ
- ປັບປຸງການຮ່ວມມືປະສານງານລະຫວ່າງບໍລິສັດຜູ້ລົງທຶນ, ລັດທະບານ ແລະຊຸມຊົນ
- ຮັບປະກັນວ່າການຈັດຕັ້ງປະຕິບັດໂຄງການແມ່ນນຳເນີນ ແລະຈັດຕັ້ງປະຕິບັດໄປຕາມນະໂຍບາຍ ແລະກົດໝາຍຂອງລາວ

### ຂະບວນການຂັ້ນຕອນ ໃນການແກ້ໄຂຄຳຮ້ອງທຸກ

1. ພະຍາຍາມໃຫ້ມີຄວາມໂປ່ງໃສເພື່ອນຳໄປສູ່ທາງອອກທີ່ມີຄວາມເປັນເອກະພາບກັນຢູ່ໃນລະດັບໂຄງການ (ລະບຸໄວ້ໃນ ບົດແນະນຳວິຊາການ: ຈັດປະຊຸມໃນສະຖານທີ່ສາທາລະນະໂດຍການເຂົ້າຮ່ວມຈາກໂຕແທນຂອງຜູ້ທີ່ຖືກຜົນກະທົບ, ອົງການຈັດຕັ້ງບໍຫວັງຜົນກຳໄລໃນທ້ອງຖິ່ນ, ອົງການຈັດຕັ້ງມະຫາຊົນ, ນາຍບ້ານ)

2. (ຖ້າເຫັນວ່າຜູ້ຖືກຜົນກະທົບບໍ່ມີຄວາມເພິ່ງພໍໃຈໃນການແກ້ໄຂໃນ 15 ວັນ) ປະຊາຊົນຜູ້ທີ່ຖືກຜົນກະທົບຈະນຳສະເໜີ ເຖິງຄະນະກຳມະການແກ້ໄຂຄຳຮ້ອງທຸກຢູ່ໃນຂັ້ນເມືອງ (ລະບຸໄວ້ໃນບົດລາຍງານວິຊາການ: ຕົວແທນຂອງຜູ້ຈັດຕັ້ງ ປະຕິບັດແຜນ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລຂັ້ນທ້ອງຖິ່ນ ແລະອົງການຈັດຕັ້ງມະຫາຊົນຄວນຮັບປະກັນວ່າຄຳຮ້ອງ ທຸກ ຈະນຳສະເໜີ ເຖິງຄະນະກຳມະການແກ້ໄຂການຮ້ອງທຸກ GRC)

3. (ຖ້າເຫັນວ່າຜູ້ຖືກຜົນກະທົບບໍ່ມີຄວາມເພິ່ງພໍໃຈໃນການແກ້ໄຂໃນ 20ວັນ (ຢູ່ໃນບົດລາຍງານວິຊາການ). ຈະນຳສະ ເໜີການຮ້ອງທຸກຫາສຳນັກງານໃຫຍ່ຂອງໂຄງການ ແລະ ອົງການວິທະຍາສາດ ເທັກໂນໂລຢີ ສິ່ງແວດລ້ອມ (ປະຈຸບັນແມ່ນກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ) [ລະບຸໄວ້ໃນບົດລາຍງານວິຊາການ: ຕົວແທນ ຂອງຜູ້ທີ່ຖືກຜົນກະທົບ, ອົງການຈັດຕັ້ງບໍ່ຫວັງຜົນກຳໄລຂັ້ນທ້ອງຖິ່ນ ຫຼື ອົງການຈັດຕັ້ງມະຫາຊົນມີສິດນຳສະເໜີຫາ ສຳນັກງານໃຫຍ່ຂອງໂຄງການ ແລະ ອົງການວິທະຍາ ສາດເຕັກໂນໂລຊີສິ່ງແວດລ້ອມ ອວຕສ] )

4. ຖ້າເຫັນວ່າຜູ້ຖືກຜົນກະທົບບໍ່ມີຄວາມເພິ່ງພໍໃຈໃນການແກ້ໄຂພາຍໃນ 20 ວັນແມ່ນນຳສະເໜີການຮ້ອງ ຟ້ອງທາງກົດໝາຍຫາສານ.

### ຂະບວນການຮ້ອງທຸກ

ກົດໝາຍ, ສານປະຊົນ

*20 ວັນ*

ຂັ້ນສູນກາງ

ເຈົ້າຂອງ ໂຄງການ

ກະຊວງຊັບ ພະຍາກອນ

*ຕົວແທນຂອງຊາວບ້ານ ຫຼືອົງການຈັດຕັ້ງ*

*15 ວັນ*

ຄະນະກຳມະການແກ້ໄຂຄຳຮ້ອງທຸກ GRC

*ຕົວແທນຂອງຊາວບ້ານ ຫຼືອົງການຈັດຕັ້ງ*

*15 ວັນ*

ໃນຂັ້ນບ້ານ

ຊາວບ້ານ

ເຈົ້າຂອງ ໂຄງການ

*ຕົວແທນຂອງຊາວບ້ານ*











# ສິ່ງທີ່ຄວນຈະຕ້ອງໄດ້ເອົາໃຈໃສ່ ແລະ ການນຳໃຊ້ໃນຂັ້ນຕໍ່ໄປ

1. ອາດຈະຕອບບັນດາຂໍ້ຂ້ອງໃຈຂອງຊາວບ້ານບໍ່ໄດ້ທັງໝົດ
2. ຕ້ອງແມ່ນຜູ້ເຂົ້າໃຈນະໂຍບາຍ ແລະ ມີປະສົບການ
3. ຕ້ອງມີງົບປະມານໃນການລົງຈັດຕັ້ງປະຕິບັດ
4. ປະຊາຊົນມີຄວາມຄາດຫວັງຕໍ່ກັບນະໂຍບາຍຂອງລັດທະບານ
5. ຂໍ້ຜູກພັນສັນຍາກັບຜູ້ລົງທຶນ

# ສົນທະນາກັບຊຸມຊົນ ກຸ່ມແມ່ຍິງ



# ການສົນທະນາກັບຊຸມຊົນກຸ່ມຊາຍ



# ການມີສ່ວນຮ່ວມຂອງລັດທະບານທ້ອງຖິ່ນ



# ການມີສ່ວນຮ່ວມຂອງລັດທະບານຂັ້ນແຂວງ



# ໂຄງການເຊື່ອມໂຍງຊ່ອງທາງການຈັດຕັ້ງປະຕິບັດນະໂຍບາຍຕໍ່ກັບໄຟຟ້າພະລັງງານນໍ້າ(MK11)

Communications and Feedback Mechanisms to Improve Participation in Decision-Making for Local Land and Water Use

# ປະສົບການຕົວຈິງທີ່ໄດ້ລົງຈັດຕັ້ງປະຕິບັດ

ເມືອງຫີນເຫີບ ແຂວງວຽງຈັນ

ພະລັງງານແລະບໍ່ແຮ່ ENERGY AND MINES

ກຊສ MONRE

VILLAGE FOCUS INTERNATIONAL

Australian AID

CGIAR Challenge Program on WATER & FOOD

Andes • Ganges • Limpopo • Mekong • Nile • Volta

# ຄູ່ຮ່ວມງານໃນຂັ້ນທ້ອງຖິ່ນ

- ## ຂັ້ນແຂວງ

1. ຫ້ອງວ່າການປົກຄອງແຂວງວຽງຈັນ
2. ພະແນກລັງງານ ແລະ ບໍ່ແຮ່
3. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
4. ພະແນກພາຍໃນ

- ## ຂັ້ນເມືອງ

1. ຫ້ອງວ່າການປົກຄອງເມືອງ
2. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
3. ຫ້ອງການພະລັງງານບໍ່ແຮ່
4. ຫ້ອງການສະຫະພັນແມ່ຍິງເມືອງ
5. ຫ້ອງການກະສິກຳ-ປ່າໄມ້
6. ຫ້ອງການພາຍໃນ
7. ຫ້ອງການຍຸຕິທຳ
8. ຫ້ອງການ ຍທຂ

# ນ້ຳລິກ 1 ເມືອງຫີນເຫີບ



ໂຄງການເຄື່ອນໄຟຟ້ານ້ຳລິກ1, ບໍລິສັດນ້ຳລິກ 1 ພາວເອີຈຳກັດ,
ຜູ້ກໍ່ສ້າງບໍລິສັດ ໂປຣໂກ, ຕິດຕັ້ງ 65 MW, ໄລຍະສຳປະທານ 30 ປີ

# ກ່ອນໜ້າທີ່ມີການຮ່ວມມືກັບໂຄງການ

- ໄດ້ເຫັນຕົວແທນຂອງບໍລິສັດລົງມາເກັບກຳຂໍ້ມູນ ແຕ່ຍັງບໍ່ທັນມີການພົບພໍ້ກັບບໍລິສັດ
- ຢູ່ໃນລະດັບເມືອງ ແລະ ບ້ານຍັງບໍ່ທັນເຂົ້າໃຈໃນນະໂຍບາຍຕໍ່ກັບໄຟຟ້າພະລັງງານນ້ຳ ເປັນຕົ້ນແມ່ນ:
  - ການຊົດເຊີຍ
  - ການຍົກຍ້າຍຈັດສັນ
  - ການພັດທະນາຊີວິດການເປັນຢູ່



- ຍັງບໍ່ທັນມີໂອກາດໃນການປຶກສາຫາລືກັບບໍລິສັດ

# ກິດຈະກຳ

- ການລົງໂຄສະນາເຜີຍແຜ່ນະໂຍບາຍ (ການນຳໃຊ້ ໄປສເຕີ ແລະ ແຜ່ນພັບ)
  - ພະແນກການຂັ້ນແຂວງ 4 ພາກສ່ວນ
  - 8 ຫ້ອງການທີ່ກ່ຽວຂ້ອງໃນຂັ້ນເມືອງໄດ້ລົງສົມທົບກັບອຳນາດການປົກຄອງ
  - ບ້ານຈຳນວນ 14 ບ້ານທີ່ນອນຢູ່ໃນເປົ້າໝາຍທີ່ຈະຖືກຜົນກະທົບຈາກໂຄງການ
    - ໃນນັ້ນມີບ້ານເຜົ່າລາວລຸ່ມ ແລະ ຊົນເຜົ່າ ກືມມຸ
  - ແຕ່ລະບ້ານແມ່ນໃຊ້ເວລາ 1 ວັນໃນການເຜີຍແຜ່ນະໂຍບາຍ
- ແລະໄດ້ຄັດເລືອກຄະນະກຳມະການຂັ້ນບ້ານບ້ານລະ 4 ທ່ານ
  - ໄດ້ຝຶກອົບຮົມ ແລະ ປຶກສາຫາລືກ່ຽວກັບການສ້າງຕັ້ງຄະນະກຳມະການຂັ້ນເມືອງ
  - ແລະ ໄດ້ຝຶກອົບຮົມໃຫ້ຄະນະກຳມະການທັງ 4 ທ່ານໃນ 14 ບ້ານ
  - ແຕ່ລະບ້ານມີຄວາມສົນໃຈຕໍ່ກັບບັນດາເຄື່ອງມືທີ່ນຳລົງໄປເຜີຍແຜ່

# ຜົນໄດ້ຮັບ

- ຊາວບ້ານມີຄວາມເຂົ້າໃຈນະໂຍບາຍ ແລະ ຂັ້ນຕອນ ການຈັດຕັ້ງປະຕິບັດດັ່ງນີ້:
  - ການຊົດເຊີຍຜົນເສຍຫາຍຂອງປະຊາຊົນ
  - ການຫຍັບຍ້າຍຈັດສັນບ່ອນຢູ່ໃໝ່ໃຫ້ປະຊາຊົນ
  - ການພັດທະນາຊີວິດການເປັນຢູ່
  - ຂັ້ນຕອນໃນການຮ້ອງທຸກຂອງປະຊາຊົນ
- ປະຈຸບັນແມ່ນຮູ້ແນວທາງໃນການທີ່ຈະປຶກສາຫາລືກັບຕົວແທນຂອງບໍລິສັດ



# Thanks

